ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------===000===-------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0321/23 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 10 ພະຈິກ 2023

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 7/2023, ທີ່ຈັດຂຶ້ນໃນວັນທີ 10 ພະຈິກ 2023.

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 7/2023, ທີ່ຈັດຂຶ້ນໃນວັນທີ 10 ພະຈິກ 2023 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຊາບຜົນການປະເມີນການຈັດຕັ້ງປະຕິບັດຄຸ້ມຄອງການບໍລິຫານ (Corporate Governance).
2. ອະນຸມັດງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ແລະ ງົບກຳໄລຂາດທຶນສຳເລັດ) ປະຈຳໄຕມາດ 3 ປີ 2023 ທີ່ຜ່ານການຮັບຮອງຈາກຜູ້ບໍລິຫານ ແລະ ອະນຸມັດໃຫ້ເປີດເຜີຍຂໍ້ມູນສູ່ສາທາລະນະ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວແລ້ວ;
3. ອະນຸມັດຫຼັກເກນ ແລະ ແນວທາງການຄັດເລືອກສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດເກົ່າທີ່ຈະໝົດວາລະລົງ;
4. ອະນຸມັດກຳນົດນະໂຍບາຍກ່ຽວກັບການເບິ່ງແຍງກິດຈະການທີ່ດີ ຂອງບໍລິສັດ;
    a. ນະໂຍບາຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນກິດຈະການ ຄູ່ຄ້າ ແລະ ເຈົ້າໜີ້
    b. ນະໂຍບາຍ ຫຼັກເກນແນວທາງຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານ
    c. ນະໂຍບາຍ ສິດ, ໜ້າທີ ແລະ ຜົນຕອບແທນຂອງ ສະມາຊິກສະພາບໍລິຫານ

d. ນະໂຍບາຍ ການພັດທະນາບຸກຄະລາກອນ ແລະ ຝຶກອົບຮົມ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ.

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ



(ທ່ານ ມານິບ ຕຣິລົກວິໄລ)